# ການລ້ຽງໝູ

## I. ການປຸກສ້າງຄອກ

### 1. ການເລືອກສະຖານທີ:

ສະຖານທີ ທີ່ເໝາະສົມສຳຫຼັບ ການ ປຸກສ້າງຄອກໝູ ຄວນເປັນບ່ອນໂນນສູງ ນ້ຳບໍ່ຖ້ວມ ,ຄວນປຸກຄອກ ໝູ ຫ່າງຈາກເຮືອນຢ່າງນ້ອຍ 15 — 20 ແມັດເພື່ອປ້ອງກັນກິ່ນເໝັນ.

### 2. ແບບຄອກໝູ:

ຄອກໝູທີ່ນິຍົມສ້າງມີ 4 ແບບຄື:

ກ. ແບບເທີບໝາແຫງນທຳມະດາ



ຂ. ແບບເທີບໝາແຫງນກ່າຍ



ຄ. ແບບໝ້າຈົ່ວທຳມະດາ



ງ. ແບບໝ້າຈົ່ວ 2 ຊັ້ນ



**ເນື້ອທີ່ບັນຈຸໝູແຕ່ລະລຸ້ນ**

| ໝູລ້ຽງລູກ | ໝູພໍ່ແມ່ພັນ | ໝູລຸ້ນ | ໝູນ້ອຍ |
|---|---|---|---|
| 4 ຕາແມັດ ຕໍ່ໂຕ | 2 ຕາແມັດ ຕໍ່ໂຕ | 1 ຕາແມັດ ຕໍ່ໂຕ | 0,5 ຕາແມັດ ຕໍ່ໂຕ |

## II. ການຄັດເລືອກແນວພັນ :

ປັດໃຈສຳຄັນໃນການເລືອກແນວພັນມີດັ່ງນີ້:

- ບໍ່ເອົາໝູທີ່ມາຈາກສາຍເລືອດໃກ້ຄຽງກັນ.
- ເລືອກໂຕທີ່ໄດ້ມາຈາກແມ່ທີ່ລ້ຽງລູກດີໃຫ່ຍໄວໃຫ້ລູກຫຼາຍ ແລະໂຕທີ່ຈະເລີນເຕີບໂຕໄວກ່ວາໝູ່ໃນ ຝູງ.
- ເອົາໂຕທີ່ມີເຕົ້ານົມ 12 ເຕົ້າ, ມີ ໄລຍະຫ່າງສະໝ່ຳສະເໝີ.
- ເລືອກເອົາໂຕທີ່ມີຮູບຮ່າງສົມບູນດີ ຖ້າເປັນໂຕຜູ້ ຄວນເລືອກເອົາໂຕທີ່ໃຫ່ຍ, ແຄ່ງຂາແຂງແຮງ ແກ່ນອັນທະໃຫ່ຍ ສະ ໝ່ຳສະເໝີ.

**ລັກສະນະປະຈຳພັນ:**

ໝູພັນ ທີ່ນິຍົມກັນລ້ຽງໃນບ້ານ ເຮົາມີ 3 ສາຍພັນຄື:

### 1. ພັນລາກສະວາຍ (LW):

ໝູພັນລາກສະວາຍ →



ເປັນໝູພັນທີ່ມີສີຂາວລ້ວນ ຫົວໃຫ່ຍ ແຄ່ງຂາໃຫ່ຍແລະແຂງແຮງ ໃບຫູຕັ້ງຊື່ ລ້ຽງລູກດີ ໃຫ້ລູກຫຼາຍສະເລັ່ຽ 12 — 14 ໂຕ ຕໍ່ ຊອກ.

### 2. ພັນແລນເດຣດ(LR) :

ເປັນໝູພັນທີ່ມີຂົນ ແລະ ໜັງສີ ຂາວລ້ວນ ລຳຕົວຍາວ ໃບຫູຕູບ ໃຫ້ລູກຫຼາຍສະເລັ່ຍ 12—14ໂຕ ຕໍ່ ຊອກ.

ໝູ ພັນແລນເດຣດ →



### 3. ພັນດູຣອກ (DR):

ເປັນພັນມີສີແດງເຂັ້ມ ມີຮູບຮ່າງ ໃຫ່ຍແຂງແຮງຫົວໃຫ່ຍປາຍຫູພັບນ້ອຍໜຶ່ງ ໃຫ້ລູກບໍ່ດົກ ແຕ່ໃຫ້ຊີ້ນຫລາຍໃຫ່ຍໄວທົນທານຕໍ່ສະພາບດິນຟ້າອາກາດ ເໝາະກັບການເຮັດລູກປະສົມ 3 ສາຍເລືອດ.

ໝູ ພັນດູຣອກ →



## III. ການປະສົມພັນ:

ກວດກາໝູແມ່ຂຶ້ນເພດ ກວດດ້ວຍຕາຄືເບິ່ງອະໄວຍະວະເພດໝູມັນຈະໃຄ່ມີສີແດງ, ໃຊ້ພໍ່ພັນກວດກາປະກົດການຂອງໝູແມ່ພັນໃຊ້ມືຂີ່ມຫຼັງ ແມ່ພັນ.

ປະກົດການຂຶ້ນເພດຂອງໝູແມ່ພັນ: ອະໄວຍະວະເພດບວມແດງ ກະວົນກະວາຍບໍ່ກິນອາ ຫາຂຶ້ນໂຄມໂຕອື່ນແລະ ມີນ້ຳເມືອກໄຫຼອອກມາ.

**<u>ໄລຍະໝູຂຶ້ນເພດ:</u> ມີ 3 ໄລຍະຄື:**

- **<u>ໄລຍະຕົ້ນ</u>:** ໝູແມ່ພຽງສະແດງອາການ ກະວົນກະວາຍ ບໍ່ກິນອາຫານແລະອະໄວຍະວະເພດບວມແດງ.
- **<u>ໄລຍະກາງ</u>:** ໄລຍະນີ້ ອະໄວຍະວະເພດແຫ່ວລົງເລັກນ້ອຍ ເປັນສີຊົມພູ ແລະ ໝູແມ່ຈະຢືນຊື່ງແມ່ນເໝາະໃນການປະສົມພັນ ແລະ ໃຫ້ປະສົມພັນທັນທີ, ໃຊ້ເວລາ 48 ຊົ່ວໂມງ, ເພື່ອຮັບປະກັນ ຄວນປະສົມພັນ 2 ຄັ້ງຫ່າງກັນປະມານ 12 ຊົ່ວໂມງເຊົ້າແລະແລງ.
- **<u>ໄລຍະທ້າຍ:</u>**

ອະໄວຍະວະໝູແມ່ ແຫ່ວລົງ ແຕ່ຍັງຂຶ້ນໂຄມ ໂຕອື່ນ ແຕ່ໂຕອື່ນຂຶ້ນໂຄມບໍ່ໄດ້ ຖ້າເຮົາເອົາມືກະ ຕຸ້ມຈຸດ ຕ່າງໆ ໝູແມ່ຈະແລ່ນໜີໄລຍະນີ້ປະສົມພັນອາດບໍ່ໄດ້ດີ.

## VI. <u>ອາຫານ ແລະ ການໃຫ້ອາຫານ</u>

ຄວນໃຫ້ອາຫານພື້ນບ້ານເຊັ່ນ: (ຮຳ, ເຂົ້າປຽນ, ສາລີ, ມັນຕົ້ນ, ຂີ້ເຫຼົ້າ, ສິ່ງເສດເຫຼືອ, ພືດຜັກຕ່າງໆ ), ອາຫານສຳເລັດຮູບຈາກໂຮງງານ (ແຕ່ລາຄາແພງ).

ການໃຫ້ອາຫານໝູແຕ່ລະລຸ້ນແຕກຕ່າງກັນຄື: ໝູນ້ອຍຢ່ານົມ ໃຫ້ມື້ໜຶ່ງ 200 ກຣາມ ແບ່ງເປັນ 4 ຄາບ/ມື້ ສ່ວນໝູລຸ້ນໃຫ້ 2—2,5 ກິໂລ/ໂຕ/ມື້, ພໍ່ແມ່ພັນໃຫ້ 3—3,5 ກິໂລ/ມື້ໂດຍ ແບ່ງອອກເປັນ 2 ຄາບ.

## V. <u>ບາງພະຍາດທີ່ມັກເກີດກັບໝູ</u>

1. **<u>ພະຍາດອະຫິວາໝູ:</u>**

ພະຍາດນີ້ເປັນພະຍາດທີ່ຮ້າຍແຮງ ສຳລັບໝູ ແລະ ລະບາດໄດ້ຢ່າງໄວວາ, ຖ້າໝູຕິດເຊື້ອ ພະ ຍາດນີ້ແລ້ວ ຈະ ຕາຍເຖິງ 80—100%. ສາຍເຫດ: ເກີດຈາກ ເຊື້ອໄວຣັດ, ຄອກເປື້ອນ , ໝູທີ່ຕິດພະຍາດນີ້ ຈະບໍ່ ກິນອາຫານ ເຫງົາ,ໄຂ້ຂຶ້ນສູງ ນອນຈຸ້ມກັນ,ຫາຍໃຈຝືດ, ທຳ ອິດໝູຈະຂີ້ແກ່ນ ແລະ ຕໍ່ມາຂີ້ຈອກ ຢູ່ຕາມໃບຫູ, ແອບແອຂາ , ພື້ນທ້ອງມີຕຸ່ມຊ້ຳ ແລະ ສອງຂາຫຼັງລ່ອຍ .

- **<u>ການປ້ອງກັນ:</u>**

ສາມາດປ້ອງກັນໄດ້ໂດຍ ການ ສັກຢາວັກຊີນ ອະຫິ ວາໝູ 2 ເທື່ອຕໍ່ປີ ແລະ ສາມາດສັກໝູທີ່ມີອາຍຸ 1 ເດືອນ ຂຶ້ນໄປ
ຖ້າໂຕໃດທີ່
ສົງໄສເປັນພະຍາດນີ້ຄວນແຍກ ອອກ ຈາກຝູງໂດຍດ່ວນ. ແລະທຳການ ຂ້າເຊື້ອຄອກດ້ວຍປູນຂາວ ຫລື ຢາ ຂ້າ ເຊື້ອອື່ນ.

- **<u>ການປິ່ນປົວ</u>:**

ພະຍາດນີ້ ບໍ່ສາມາດຈະປິ່ນປົວໄດ້ ມີແຕ່ສັກ ຢາປ້ອງ ກັນເທົ່ານັ້ນ.

2. **<u>ພະຍາດຂີ້ແເຈັບທ້ອງຂອງໝູນ້ອຍ:</u>**

ຖ້າໝູນ້ອຍເປັນພະຍາດນີ້ແລ້ວໂຕທີ່ລອດຕາຍລ້ຽງນານໃຫ່ຍແລະມັກຈະ ເກີດກັບໝູນ້ອຍດູດນົມ ແລະ ໝູນ້ອຍຢ່ານົມ.

- **<u>ສາຍເຫດ</u>:**

ເກີດຈາກເຊື້ອອີໂກລາຍ,ຈາກຄອກໝູທີ່ ເປື້ອນ, ດູດເຕົ້ານົມແມ່ທີ່ບໍ່ສະອາດ, ຄອກບໍ່ໄດ້ຂ້າເຊື້ອ ແລະ ອາກາດມີການປ່ຽນແປງຢ່າງກະທັນຫັນ.

- **<u>ອາການ:</u>**

ໝູນ້ອຍຈະເຈັບທ້ອງຢ່າງຮຸນແຮງ, ຂີ້ເປັນນ້ຳສີ ຂາວປົນຂຽວ ມີກິ່ນເໝັນຄາວ, ໝູນ້ອຍອອ່ນເພັຍ ອຸ່ນຫະ ພຸມຫລຸດຕົນໂຕເຢັນ 2 ຂາຫຼັງລ່ອຍແລະຕາຍໃນ ທີ່ສຸດ.

- **<u>ການປ້ອງກັນ:</u>**

ໃຫ້ໝູນ້ອຍ ທີ່ເກີດໃໝ່ ກິນນ້ຳນົມ ເຫຼືອງ ຈາກແມ່ໃຫ້ຫຼາຍ, ຮັກສາຄອກບໍ່ໃຫ້ປຽກຊຸ່ມໃຫ້ຄວາມອົບອຸ່ນ ຢ່າງພຽງພໍ.

- **<u>ການປິ່ນປົວ:</u>**

ສັກຢາຕ້ານເຊື້ອ ເຈນຕາໄມຊິນທີ, ສະ ເຕັບ ໂຕໄມຊິນ,ເປນີຊີລິນ, ເອໂລຟຣອກ ຕິດຕໍ່ກັນ 3 ວັນ ນອກຈາກນີ້ຄວນໃຫ້ວິຕາມິນຕື່ມເພື່ອຊ່ວຍ ໃຫ້ໝູ ນ້ອຍ ແຂງແຮງ.

**Supported by**
**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ສູນສົ່ງເສີມການລ້ຽງສັດ ແລະ ປາ

# ເຕັກນິກ
# ການລ້ຽງໝູ



**ໜ່ວຍງານຝຶກອົບຮົມ ເຕັກນິກດ້ານການລ້ຽງສັດ ແລະ ປາ**
ໂທລະສັບ: (021) 621018
ແຟກ: (021) 621018
EMail : lec@laotel.com
ສະໜັບສະໜູນໂດຍ : ໂຄງການ ສົ່ງເສີມ ກະສິກຳ (LEAP)